American Red Cross

ການປ້ອງກັນອັກຄີ ີໄພ ແລະຄວາມປອດໄພ

ວິທີການທີ່ມີປະສິດທິພາບທີ່ສຸດເພື່ອປ້ອງກັນຕົວທ່ານເອງ ແລະບ້ານຂອງທ່ານຈາກອັກຄີໄພແມ່ນເພື່ອກຳນົດ ແລະກຳຈັດເຄື່ອງກີດຂວາງທີ່ຈະເຮັດໃຫ້ເກີດອັກຄີໄພ. ຫົກສິບເປີເຊັນຂອງການເສຍຊີວິດຈາກໄຟໄໝ້ບ້ານແມ່ນເກີດຂຶ້ນຢູ່ໃນບ້ານທີ່ບໍ່ມີເຄື່ອງເຕືອນໄຟໄໝ້. ໃນລະຫວ່າງໄຟໄໝ້ບ້ານ, ເຄື່ອງເຕືອນສັນຍານໄຟໄໝ້ຈາກຄວັນ ແລະແຜນການໜີໄຟທີ່ໄດ້ຝຶກຊ້ອມເປັນປົກກະຕິແມ່ນສາມາດຊ່ວຍຊີວິດໄດ້.

## ປ້ອງກັນອັກຄີໄພໃນບ້ານ

- ເອົາສິ່ງຂອງຕ່າງໆທີ່ສາມາດຕິດໄຟໄດ້ນັ້ນອອກຫ່າງຈາກເຄື່ອງທີ່ເຮັດໃຫ້ເກີດຄວາມຮ້ອນຢ່າງໜ້ອຍ 3 ຟຸດ ເຊັ່ນ: ເຄື່ອງທຳຄວາມຮ້ອນ ແລະເຕົາໄຟ
- ຢ່າສູບຢາຢູ່ເທິງຕຽງນອນ.
- ສອນເດັກນ້ອຍຢູ່ສະເໝີກ່ຽວກັບເລື່ອງອັນຕະລາຍຂອງໄຟ, ໄມ້ຂີດໄຟ ແລະກັບໄຟ, ແລະເອົາອອກຫ່າງຈາກມືເຂົາເຈົ້າ.
- ປິດເຄື່ອງທຳຄວາມຮ້ອນທີ່ສາມາດເອົາໄປມາໄດ້ ເມື່ອອອກໄປຈາກຫ້ອງ ຫຼືໄປນອນ.
- ຈົ່ງຢູ່ໃນເຮືອນຄົວເມື່ອແຕ່ງກິນເຊັ່ນ: ການທອດ, ການປີ້ງ ຫຼືການຕົ້ມອາຫານ. ຖ້າທ່ານຈະອອກໄປຈາກເຮືອນຄົວແມ່ນໃຫ້ປິດເຕົາໄຟກ່ອນ, ເຖິງວ່າຈະອອກໄປໃນເວລາອັນສັ້ນກໍ່ຕາມ.

## ປະຕິບັດຕາມວິທີການດ້ານຄວາມປອດໄພຈາກໄຟຢູ່ໃນບ້ານ

- ຕິດຕັ້ງເຄື່ອງເຕືອນໄຟໄໝ້ຈັບຄວັນໃນທຸກໆຊັ້ນຂອງບ້ານທ່ານ, ໃນຫ້ອງນອນ, ແລະຢູ່ນອກພື້ນທີ່ບ່ອນນອນ. ທົດສອບພວກມັນທຸກໆເດືອນ ແລະປ່ຽນຖ່ານພວກມັນຢ່າງໜ້ອຍປີລະຄັ້ງ.
- ຕິດຕັ້ງເຄື່ອງເຕືອນສັນຍານການກວດຈັບທາດຄາບອນມໍນອອກໄຊດ໌ຢູ່ໃນບ່ອນເຄິ່ງກາງໃນແຕ່ລະຊັ້ນຂອງບ້ານທ່ານ ແລະຢູ່ດ້ານນອກບ່ອນນອນ. ເຄື່ອງເຕືອນສັນຍາການກວດຈັບທາດຄາບອນມໍນອກໄຊດ໌ບໍ່ແມ່ນເອົາມາປ່ຽນເຄື່ອງເຕືອນສັນຍານໄຟໄໝ້ຈັບຄວັນ. ໃຫ້ຮູ້ຄວາມແຕກຕ່າງຂອງສຽງສັນຍານລະຫວ່າງເຄື່ອງເຕືອນສັນຍານໄຟໄໝ້ຈັບຄວັນ ແລະເຄື່ອງເຕືອນສັນຍານການກວດຈັບທາດຄາບອນມໍນອກໄຊດ໌.
- ຄວນພິຈາລະນາໃຫ້ມີບັ້ງດັບເພີງອັນໜຶ່ງຢູ່ໃນເຮືອນ ຫຼືຫຼາຍອັນກວ່ານັ້ນ. ເຂົ້າຝຶກອົບຮົມນຳພະແນກດັບເພີງກ່ຽວກັບວິທີການໃຊ້.
- ຄວນພິຈາລະນາຕິດຕັ້ງລະບົບສະປິງເກີນອດໄຟອັດຕະໂນມັດຢູ່ໃນບ້ານຂອງທ່ານ.
- ບອກສະມາຊິກຄົວເຮືອນທຸກຄົນກ່ຽວກັບແຜນຜັງທາງໜີໄຟ ແລະຝຶກຊ້ອມແຜນການນັ້ນປີລະສອງຄັ້ງ.

## ໃນກໍລະນີເກີດໄຟໄໝ້

- ໄປຕາມແຜນຜັງການໜີໄຟຂອງທ່ານ.
- ຈື່ໄວ້ວ່າຈະຕ້ອງໜີ**ອອກໄປ**, **ຢູ່ໃຫ້ໄກ** ແລະ**ໂທຫາ 9-1-1** ຫຼືໝາຍເລກໂທລະສັບສຸກເສີນໃນທ້ອງຖິ່ນຂອງທ່ານເມື່ອທ່ານອອກໄປຈາກອາຄານໄດ້ຢ່າງປອດໄພ.